# ຢຸດເຮັດວຽກເພືອໄປລົງຄະແນນສຽງ

**VOTE 2024**

## *ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

ນາຍຈ້າງຂອງທ່ານຕ້ອງຈ່າຍຄ່າຈ້າງໃຫ້ທ່ານໃນເວລາທີ່ທ່ານໄປລົງຄະແນນສຽງ ຖ້າວ່າມັນເປັນເວລາເຮັດວຽກຂອງທ່ານ ນາຍຈ້າງຂອງທ່ານບໍ່ສາມາດຮຽກຮ້ອງໃຫ້ທ່ານໃຊ້ເວລາພັກຜ່ອນສ່ວນບຸກຄົນຫຼືເວລາພັກຮ້ອນຂອງທ່ານ

ໃຫ້ທ່ານໃຊ້ເວລາພຽງແຕ່ໄປລົງຄະແນນສຽງເທົ່ານັ້ນແລ້ວກັບຄືນໄປເຮັດວຽກ

ນາຍຈ້າງຂອງທ່ານບໍ່ສາມາດປະຕິເສດ,ຈຳກັດ, ຫຼືແຊກແຊງສິດນີ້ໂດຍກົງຫຼືໂດຍທາງອ້ອມ ລວມທັງເວລາໃດທີ່ທ່ານເລືອກທີ່ຈະໄປລົງຄະແນນສຽງ

ນາຍຈ້າງຂອງທ່ານສາມາດຂໍໃຫ້ທ່ານແຈ້ງເຂົາເຈົ້າເວລາທີ່ທ່ານຈະໄປ ແລະຂໍໃຫ້ພະນັກງານປະສານງານການຂາດງານຂອງພວກເຂົາເຈົ້າ ເພື່ອຫຼຸດຜ່ອນຜົນກະທົບໃນການເຊົາເຮັດວຽກ

ທ່ານມີສິດທີ່ຈະຢຸດເຮັດວຽກເພື່ອໄປລົງຄະແນນສຽງ ໃນການເລືອກຕັ້ງຂອງລັດແລະລັດຖະບານກາງທັງໝົດແລະໃນການເລືອກຕັ້ງປະຈຳທ້ອງຖິ່ນທັງໝົດທີ່ກຳນົດໄວ້

### *ວັນທີຂອງປີ 2024*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 13 ສິງຫາ*

***ລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 20 ກັນຍາ ເຖິງ 4 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 15 ຕູລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ່5ເດືອນພຶດສະຈິກາ*

ມີຕໍ່ຂ້າງຫລັງ...

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
*mnvotes.gov • 1-877-600-VOTE*

# ຢຸດເຮັດວຽກເພືອໄປລົງຄະແນນສຽງ

VOTE
2024

...ສືບຕໍ່ຈາກຂ້າງໜ້າ

## *ການຮ້ອງທຸກ*

ນາຍຈ້າງທີ່ລະເມີດກົດໝາຍນີ້ແມ່ນມີຄວາມຜິດອາຍາຖານເບົາ ທຸກໆຄຳຮ້ອງທຸກຈາກພະນັກງານຄວນຍື່ນໃຫ້ທະນາຍຄວາມຂອງຄາວຕີ້

## *ລົງຄະແນນສຽງລ່ວງໜ້າດ້ວຍໃບລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງ*

ທ່ານສາມາດລົງຄະແນນສຽງລ່ວງໜ້າ ຖ້າຫາກວ່າທ່ານບໍ່ຕ້ອງການຫຼືບໍ່ສາມາດລົງຄະແນນສຽງດ້ວຍຕົວເອງໃນວັນເລືອກຕັ້ງ. ສິດລາວຽກເພື່ອໄປລົງຄະແນນສຽງແມ່ນໄດ້ຮັບການຂະຫຍາຍໃຫ້ເຖິງຊ່ວງໄລຍະເວລາການລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງ, ເຊິ່ງເລີ່ມຕົ້ນ 46 ວັນກ່ອນການເລືອກຕັ້ງ.

ທ່ານສາມາດລົງຄະແນນສຽງລ່ວງໜ້າ ດ້ວຍການລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງຢູ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ. ນອກນັ້ນທ່ານຍັງສາມາດຮ້ອງຂໍໃຫ້ມີບັດລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງໃຫ້ທ່ານທາງໄປສະນີທີ່ mnvotes.gov/absentee.

***ຈົດໝາຍສຳລັບນາຍຈ້າງຂອງທ່ານ***
*ໄປທີ່ mnvotes.gov ເພື່ອຊອກຫາຈົດໝາຍອະທິບາຍສິດທີ່ຢຸດເຮັດວຽກເພື່ອໄປລົງຄະແນນສຽງ ທີ່ທ່ານສາມາດໃຫ້ນາຍຈ້າງຂອງທ່ານ*

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
*mnvotes.gov • 1-877-600-VOTE*